**Forte**
**General Insurance**

# ຂໍ້ແນະນຳກ່ຽວກັບຂັ້ນຕອນການຈ່າຍສິນທົດແທນປະກັນໄພລົດ

**RED TEAM** | ເບີຊ່ວຍເຫຼືອສຸກເສີນອຸປະຕິເຫດ **2234 8656 / 9999 8656**

## I. ຂັ້ນຕອນການແກ້ໄຂຄະດີ ຂອງ ບໍລິສັດ ຟໍເຕ-ໂຕໂກ ລາວ ປະກັນໄພ ຈຳກັດ

### 1. ຂັ້ນຕອນດຳເນີນການພິຈາລະນາຈ່າຍສິນທົດແທນ

ບໍລິສັດ ຟໍເຕ-ໂຕໂກ ລາວ ປະກັນໄພ ຈຳກັດ ດຳເນີນການແກ້ໄຂຄະດີ ແລະ ພິຈາລະນາສິນທົດແທນປະກັນໄພ ຜ່ານຂັ້ນຕອນດັ່ງລຸ່ມນີ້:

1) ຂັ້ນຕອນການຮັບແຈ້ງອຸປະຕິເຫດ
2) ຂັ້ນຕອນການເກັບກຳຂໍ້ມູນປະກອບສຳນວນຄະດີພາກສະໜາມ
3) ຂັ້ນຕອນການນຳລົດເຂົ້າອູ່ສ້ອມແປງຂອງ ຟໍເຕ-ໂຕໂກ ລາວ ປະກັນໄພ ຈຳກັດ
4) ຂັ້ນຕອນການກວດກາ-ປະເມີນຄວາມເສຍຫາຍ (ວັດຖຸ / ຄົນ)
5) ຂັ້ນຕອນການກວດກາລາຄາ (ຄ່າສ້ອມແປງ / ບິນຢາ)
6) ຂັ້ນຕອນການພິຈາລະນາອະນຸມັດສິນທົດແທນ
7) ຂັ້ນຕອນການເບີກຈ່າຍສິນທົດແທນໃຫ້ຜູ້ມີສິດຮັບຜົນປະໂຫຍດ

### 2. ໜ່ວຍງານຮັບຜິດຊອບວຽກງານແກ້ໄຂຄະດີອຸປະຕິເຫດລົດ

| ລ/ດ | ໜ້າທີ່ຮັບຜິດຊອບ | ເບີໂທຕິດຕໍ່ |
|---|---|---|
| 1 | ໜ່ວຍງານຮັບແຈ້ງອຸປະຕິເຫດ<br>(ບໍລິການທຸກມື້ຕະຫຼອດ 24 ຊົ່ວໂມງ) | 020 2234 8656<br>020 9999 8656 |
| 2 | ໜ່ວຍງານກວດກາລາຄາການສ້ອມແປງ | 020 5798 8666<br>020 5559 8830 |
| 3 | ໜ່ວຍງານພົວພັນວຽກທົ່ວໄປ ແລະ ຕິດຕໍ່ສອບຖາມຄວາມຄືບໜ້າຂອງຄະດີ | 021 264 712-5 |
| 4 | ໜ່ວຍງານເຄືອຂ່າຍອູ່ສ້ອມແປງຂອງ<br>ບໍລິສັດ ຟໍເຕ-ໂຕໂກ ລາວ ປະກັນໄພ ຈຳກັດ | 020 5798 8666 |

## II. ການທົດແທນຄ່າປິ່ນປົວ

ການປິ່ນປົວຕ້ອງອີງຕາມແພດໝໍຫຼວງ ໂດຍມີໃບສັ່ງຢາ ແລະ ໃບຮັບເງິນຈາກໂຮງໝໍຄັດຕິດມາພ້ອມຢ່າງລະອຽດ, ບໍລິສັດ ຟໍເຕ-ໂຕໂກ ລາວ ປະກັນໄພ ຈຳກັດ ຈະບໍ່ຮັບຜິດຊອບໃຫ້ການທົດແທນຄືນສຳລັບຄ່າປິ່ນປົວທີ່ບໍ່ກ່ຽວຂ້ອງກັບອຸປະຕິເຫດ.

**ເອກະສານປະກອບການຮຽກຮ້ອງສິນທົດແທນປະກັນໄພມີຄື:**

1) ໃບທົດແທນຄວາມເສຍຫາຍຂອງ ບໍລິສັດ ຟໍເຕ-ໂຕໂກ ລາວ ປະກັນໄພ ຈຳກັດ
2) ບິນຢາ (ໃບສັ່ງຢາ ແລະ ໃບຮັບເງິນ ຈາກໂຮງໝໍ)
3) ບັດປະຈຳຕົວ, ປັດສະປໍ ຫຼື ສຳມະໂນຄົວ ຂອງຄົນເຈັບ
4) ໃບມອບສິດ ແລະ ບັດປະຈຳຕົວຜູ້ມອບສິດ
(ກໍລະນີການມອບສິດໃຫ້ບຸກຄົນອື່ນມາຮັບສິນທົດແທນ)

## III. ການທົດແທນຄ່າສ້ອມແປງລົດ

ກະລຸນາຕິດຕໍ່ໜ່ວຍງານເຄືອຂ່າຍອູ່ສ້ອມແປງຂອງ ບໍລິສັດ ຟໍເຕ-ໂຕໂກ ລາວ ປະກັນໄພ ຈຳກັດ ກ່ອນນຳລົດເຂົ້າສ້ອມແປງ ເພື່ອຫຼີກລ່ຽງບັນຫາການສ້ອມແປງບໍ່ໄດ້ມາດຕະຖານ ແລະ ບັນຫາກ່ຽວກັບການຈ່າຍເງິນຄ່າສ້ອມແປງລົດ, ບໍລິສັດ ຟໍເຕ-ໂຕໂກ ລາວ ປະກັນໄພ ຈຳກັດ ຈະບໍ່ຮັບຜິດຊອບຕໍ່ຜົນເສຍຫາຍທີ່ເກີດຂຶ້ນໃນກໍລະນີມີບັນຫາຈາກການນຳລົດເຂົ້າສ້ອມແປງເອງ ໂດຍບໍ່ໄດ້ຮັບການອະນຸມັດຈາກ ບໍລິສັດ ຟໍເຕ-ໂຕໂກ ລາວ ປະກັນໄພ ຈຳກັດ. ກ່ອນນຳລົດຂອງທ່ານເຂົ້າສ້ອມແປງ ຂໍໃຫ້ທ່ານປະຕິບັດຕາມຂັ້ນຕອນດັ່ງລຸ່ມນີ້:

| | |
|---|---|
| ເຈົ້າຂອງລົດ ↓ | 1) ຕິດຕໍ່ໜ່ວຍງານເຄືອຂ່າຍອູ່ສ້ອມແປງລົດຂອງ ບໍລິສັດ ຟໍເຕ-ໂຕໂກ ລາວ ປະກັນໄພ ຈຳກັດ.<br>ເບີໂທລະສັບ: 020 5798 8666<br>ວັນປະຈຳການ: ວັນຈັນ - ວັນສຸກ<br>ເວລາເຮັດການ: 08:00 ໂມງ - 17:00 ໂມງ |
| ປະກັນໄພ ↓ | 2) ພະນັກງານຮັບຜິດຊອບຈະແນະນຳຂັ້ນຕອນການດຳເນີນງານຂອງ ບໍລິສັດ ຟໍເຕ-ໂຕໂກ ລາວ ປະກັນໄພ ຈຳກັດ ໃຫ້ລູກຄ້າ ແລະ ປະສານງານກັບອູ່ສ້ອມແປງ ເພື່ອຮັບລົດເຂົ້າສ້ອມແປງ. |
| ອູ່ສ້ອມແປງ | 3) ທຳການປະເມີນລາຄາການສ້ອມແປງລົດ ແລະ ສົ່ງຕໍ່ຫາ ບໍລິສັດ ຟໍເຕ-ໂຕໂກ ລາວ ປະກັນໄພ ຈຳກັດ ເພື່ອຂໍອະນຸມັດສ້ອມແປງ, ລົງມືສ້ອມແປງພາຍຫຼັງທີ່ໄດ້ຮັບອະນຸມັດຈາກບໍລິສັດ, ມອບ-ຮັບລົດໃຫ້ລູກຄ້າພາຍຫຼັງສ້ອມແປງສຳເລັບ. |

**ເອກະສານປະກອບການຮຽກຮ້ອງສິນທົດແທນປະກັນໄພມີຄື:**

1) ໃບທົດແທນຄວາມເສຍຫາຍຂອງ ບໍລິສັດ ຟໍເຕ-ໂຕໂກ ລາວ ປະກັນໄພ ຈຳກັດ
2) ບິນສ້ອມແປງຈາກຮ້ານສ້ອມແປງ
3) ໃບຢັ້ງຢືນການສ້ອມແປງສຳເລັດ (ຕາມແບບຟອມຄັດຕິດ)
4) ໃບບິນອາກອນ
5) ບັດປະຈຳຕົວ, ປັດສະປໍ ຫຼື ສຳມະໂນຄົວ
6) ໃບມອບສິດ ແລະ ບັດປະຈຳຕົວຜູ້ມອບສິດ
(ກໍລະນີການມອບສິດໃຫ້ບຸກຄົນອື່ນມາຮັບສິນທົດແທນ)